# ໔. ພນັນກິນໝ້ຽງກັບພໍ່ຄ້າ

໔. ພນັນກິນໝ້ຽງກັບພໍ່ຄ້າ

ໃນມື້ນຶ່ງຂນະທີ່ຈິວຄຳລົງໄປອາບນ້ຳ ບັງເອີນມີພໍ່ຄ້າ ໄທຄັງຫາບໝ້ຽງມາຂາຍ , ພໍເຖິງແຄມນ້ຳ ພໍ່ຄ້າຈຶ່ງຖາມວ່າ ຈິວເອີຍ ນ້ຳນີ້ເລິກພຽງໃດເດ ຈິວຄຳຈຶ່ງຕອບວ່າ ເລິກຫລືຕື້ນກໍເບິ່ງເອົາເດ ເລີຍວ່າແນນ ເຫັນຢູ່ບໍ່ແມ່ນບໍ ? ຝ່າຍພໍ່ຄ້າໄທຄັງຈຶ່ງຖາມຈິວຄຳຕື່ມວ່າ ນ້ຳນີ້ພວກຂ້ອຍຈະຂ້າມໄປໄດ້ບໍ ? ຈິວຄຳຈຶ່ງຕອບວ່າ ໃຜຊິສາມາດ ຂ້າມນ້ຳໄດ້ຫ້ວຍນ້ຳບັກກວ້າງໆ ມາຊ່າງຖາມແນວເປັນໄປບໍ່ໄດ້ແທ້ ຄັນບໍ່ວ່າຈະມີພຣະອິນລົງມາອູ້ມເອົາຂ້າມພຸ້ນບຸ ຈຶ່ງຊິຂ້າມໄດ້

ພວກພໍ່ຄ້າ ໄດ້ຍິນຄຳຕອບຂອງຈິວເປັນວາດຂັດຫູ ກໍຈິງທ້າພິສູດຄວາມຈິງກັບຈິວຄຳທັນທີ ພວກພໍ່ຄ້າເວົ້າວ່າ ຖ້າພວກຂ້ອຍຂ້າມໄດ້ ຈິວຊິເສັຽຫຍັງໃຫ້ ? ຈິວຄຳຕອບ ອອກໄປທັນທີ ເອີເອົາໂລດ ນ່າ ! ຖ້າສູຂ້າມໄດ້ແທ້ ຂ້ອຍຊິເອົາຜ້າຄຸມຜ້າສບົງ ຜ້າມັດເອິກມັດແອວໃຫ້ໂລດ , ຈິວຄຳຖາມຄືນວ່າ ຖ້າສູຂ້າມບໍ່ໄດ້ເດ ຊິເສັຽຫຍັງໃຫ້ຂ້ອຍວ່າເບິ່ງດູ ? ພໍ່ຄ້າໄທຄັງຮັບປາກເປັນສຽງ ດຽວກັນ ວ່າ ຖ້າຂ້າມບໍ່ໄດ້ຊິຍອມເສັຽໝ້ຽງໃຫ້ ຈິວ, ແຕ່ຈິວຄຳເວົ້ານຳພໍ່ຄ້າໄທຄັງວ່າ ຢ່າພນັນຂັນແຂງກັນເທາະໜາ ມັນຊິເສັຽໝ້ຽງໃດ ມັນຊິເຄີກຂາຍລ້າໆ ແຕ່ພວກພໍ່ຄ້າກໍເປັນມັງເປັນມໍວ່າ ຈະຂ້າມໃຫ້ໄດ້.

ເມື່ອທັງສອງຝ່າຍ ຕົກລົງປົງໃຈກັນຮຽບຮ້ອຍແລ້ວ, ພວກພໍ່ຄ້າ ໄທຄັງກໍພາກັນແບກຫາບເອົາໝ້ຽງ ຂ້າມນ້ຳ ລາງຄົນກໍລອຍ ລາງ ຄົນກໍຍ່າງລູຍ ລາງຄົນກໍມຸດ ເອົາ ແຕ່ຜູ່ຊິຄິດອອກ ທັງພ່ອງໂຮ ພ່ອງແຊວຄິດ ວ່າພວກຕົນໄດ້ໄຊຊະນະຈິວແລ້ວ ພໍແຕ່ຂ້າມມາເຖິງຝັ່ງຈິວຢູ່ ພວກພໍ່ຄ້າກໍຖາມເອົາເຄື່ອງພນັນຈາກຈິວ ທັງເວົ້າຊູ່ຈິວວ່າ ເປັນຈິວ ມີສິນ ມີທັມ ຢ່າຕົວະຢ່າບຽວ ຢ່າປ່ຽນປີ້ນຄວາມໃດ ເປັນຈິວ ຂາດສິນ ຂາດທັມ ບໍ່ດີໃດ !! ຣີບຟ້າວແກ້ຜ້າຄຸມ ຜ້າສບົງ ອອກມາໃຫ້ ພວກເຮົາ ຕາທີ່ຕົກລົງກັນໄວ້.

http://sy.ban.banhieng.free.fr http://www.youtube.com/banhieng SISOMSACK STUDIO

ຈິວຈຶ່ງ ເວົ້າກັບ ພວກພໍ່ຄ້າໄຫຄັງ ວ່າ ໂຢ່ວ ຊິເອົາໃຫ້ ສູ່ເຈົ້າແນວໃດ ພວກສູ່ເຈົ້າ ບໍ່ໄດ້ພາກັນຂ້າມນ້ຳ ພວກສູ່ເຈົ້າ ພາກັນລອຍມາ ນີ້ນ່າ ຄັນຂ້າມກໍຢ່ວາງຂາຂ້າມ ແຕ່ຝັ່ງນັ້ນມາຮອດຝັ່ງນີ້ຊັ້ນຕວ່າ ຈັ່ງຊິແມ່ນ, ບັດນີ້ກູຊິເອົາໝ້ຽງຂອງພວກສູເຈົ້າ ຕາມທີ່ພນັນກັນ ກູຫາກຫ້າມສູ ຫາກບໍ່ເຊື່ອຟັງ ຈິ່ງພາກັນເອົາໝ້ຽງມາມອບໃຫ້, ຢ່າໃຫ້ເສັ້ງສັດຈະໃດ ບູຮານວ່າເສັ້ງສັດຈະນີ້ ຕົວຕາຍດີກວ່າ, ແຕ່ປາກົດວ່າ ພວກພໍ່ຄ້າ ໄຫຄັງກໍຍອມມອບໝ້ຽງໃຫ້ຈິວຄຳງ່າຍໆ ຖຽງກັນຟິດຟິດນີນັນ ຈົນຄວາມຜື່ວຟັ້ງໄປເຖິງພຍາ ເຂົາຈຶ່ງພາກັນຂຶ້ນໄປ ຂາບໄຫວ້ເລົ່າເຫດການທີ່ເກີດຂຶ້ນ ທັງໝົດໃຫ້ພຍາໄດ້ຮູ້, ເມື່ອພຍາພິຈາຣະນາດູຄັກແນ່ແລ້ວ ກໍຫາກແມ່ນຄວາມຈິວຄຳແທ້ ເພາະພໍ່ຄ້າໄຫຄັງບໍ່ໄດ້ຂ້າມນ້ຳຄືເວົ້າ ເຂົາຫາກພາກັນລອຍເອົາ, ພຍາຈຶ່ງຕັດສິນຕາມພິມເມືອງມາແຕ່ບູຮານ ບອກໃຫ້ພວກພໍ່ຄ້າເສັ້ງໝ້ຽງໃຫ້ຈິວຄຳ ຄືນລະສີ່ຊ້າຫ້າບາດ ຕາມຕາຊິງ ຢ່າໃຫ້ເອົາເກີນນັ້ນ ບໍ່ດີແລ.

ເມື່ອພວກພໍ່ຄ້າ ໄຫຄັງກັບໄປເຖິງ ຈິວຄຳຈຶ່ງຖາມວ່າ ພຍາເພິ່ນຕົກລົງແນວໃດ ໃຜຖືກໃຜຜິດແທ້ ? ພວກພໍ່ຄ້າກໍເວົ້າຊື່ ຕາມຄຳທີ່ພຍາຕັດສິນວ່າ ພຣະອົງບອກວ່າໃຫ້ຈິວໄດ້ແຕ່ພຽງສີ່ຊ້າຫ້າບາດເທົ່ານັ້ນ ບໍ່ໄໃຫ້ເອົາລື່ນເອົາເກີນ, ຝ່າຍຈິວຄຳໄດ້ຍິນກໍຄຶດຫົວ ຍຸ້ມໆ ຢູ່ໃນກົກແຂ້ວ ແລ້ວເວົ້າຕໍ່ພວກພໍ່ຄ້າວ່າ : ດີແລ້ວເດພຍາເພິ່ນ ເຮັດຖືກຮີດຖືກຄອງ, ເວົ້າແລ້ວຈິວຄຳກໍເອົາບາດຫ້າໜ່ວຍມາຕັ້ງໄວ້ ເອົາຊ້າສີ່ໜ່ວຍມາຕັ້ງໄວ້ອີກ ແລ້ວບອກພວກພໍ່ຄ້າເອົາໝ້ຽງໃສ່ໃຫ້ເຕັມ ສີ່ຊ້າຫ້າບາດ , ພໍ່ຄ້າໄຫຄັງ ປານວ່າຕາຍທັງຢືນເອົາໂລດ ຄຶດວ່າ ແມ່ນ ສີ່ຊ້າຫ້າບາດຕາຊິງຊັ້ນດອກ, ອັນນີ້ມັນຕັ້ງແມ່ນຫ້າໜ່ວຍບາດ ສີໜ່ວຍກະຊ້າ ໝ້ຽງຢູ່ຫາບກໍໝົດພໍດີ ຄາວນີ້ຕ້ອງດັບວອດ ຄືວເຮືອນ ຈະຫາເງິນໃສໄປໃຊ້ໜີ້ສິນທີ່ກູ້ຢືມມາລົງທຶນ.

http://sy.ban.banhieng.free.fr http://www.youtube.com/banhieng SISOMSACK STUDIO

ເມື່ອພວກພໍ່ຄ້າໄທຄັງ ມອບໝັ້ງໃຫ້ຈິວຄຳແລ້ວໆ ກໍເຫລືອແຕ່ໂຕອອດຈອດລ້ອນຈ້ອນ ຈຶ່ງພາກັນເຂົ້າເຝົ້າພຍາ ເພື່ອຂໍອຳລາກັບຄືນ, ພຍາຈຶ່ງຖາມວ່າ
ໄດ້ເສັຽໝັ້ງໃຫ້ຈິວຄຳຕາມທີ່ສັ່ງໄວ້ແລ້ວບໍ ? ພໍ່ຄ້າກໍຕອບວ່າໄດ້ເສັຽໃຫ້ແລ້ວ ຈົນໝົດເນື້ອໝົດຕົວ ເພາະຈິວຄຳໄໝເອົາແທ້ເອົາວ່າ ເອົາຫ້າໜ່ວຍບາດ ສີ່ໜ່ວຍກະຊ້າ ມາຜອງເອົາແທ້.
ພຍາໄດ້ຟັງກໍຄຶດຢາກຮ້າຍໃຫ້ຈິວຄຳ ເພາະເຮັດເກີນຮີດບ້ານ ຄອງເມືອງ
ທັງອີ່ດູສິງສານພວກພໍ່ຄ້າໄທຄັງທີ່ໝົດເນື້ອ ໝົດຕົວ, ພຣະອົງຈຶ່ງສັ່ງໃຫ້ ເປີດພະຄັງຫລວງ ເອົາເງິນມາແທນໃຫ້ ແກ່ພວກພໍ່ຄ້າ ພໍໃຫ້ໄປເປັນທຶນເປັນຮອນ.

ຫລັງຈາກພວກພໍ່ຄ້າອຳລາໄປແລ້ວ, ພຍາກໍຍັງຄຶດຄຽດໃຫ້ຈິວຄຳບໍ່ແລ້ວບໍ່ລືມ ຈຶ່ງມີຄຳສັ່ງໃຫ້ຈິວຄຳ ສຶກອອກມາເປັນຊາວບ້ານທັນທີ ເພາະເຫັນວ່າ ການກະທຳ ຂອງຈິວຄຳຄາວນີ້ ມັນແມ່ນວິໄສ ທີ່ຈິວຈະເຮັດແນວນັ້ນ ຜິດຮີດຈິວຄອງພຣະ ແລ້ວສິກສາດິກວ່າ, ຈິວຄຳກໍບໍ່ຂືນຄຳສັ່ງ ຂອງພຍາຜູ່ເປັນອ້າຍ ຈຶ່ງໄດ້ສຶກອອກມາ, ຄົນທັງຫລາຍ ຈຶ່ງເອີ້ນວ່າ ຊຽງໝັ້ງ ເພາະໄດ້ໝັ້ງ ນຳພໍ່ຄ້າໄທຄັງນັ້ນແລ ; ຫລັງຈາກສຶກແລ້ວ ທ້າວຄຳ ຫລື ຊຽງໝັ້ງ ກໍບໍ່ໄດ້ ໜີໄດ້ຜ່າຍໄປໃສ ຍັງເປັນຄົນຮັບໃຊ້ ພຍາປະຈຳຫໍໂຮງ, ເວົ້າແລ້ວ ກໍມີແຕ່ ຊຽງໝັ້ງ ຜູ່ດຽວເທົ່ານັ້ນ ທີ່ມີສິດພິເສດ ສາມາດເຂົ້າອອກ ນອກໃນຫໍ ຜສາດ ຣາຊມົນທຽນນີ້ໄດ້ ໂດຍບໍ່ມີບັນຫາໃດໆ.

ອ່ານຕໍ່ເຣື່ອງ ທີ່ ຫ້າໃນເດືອນ ໜ້າ

## ໕, ຊຽງໝັ້ນຽງເລືອກເມັຽ